**<u>ບົດຮຽນ 27 - ຄຣິສຕະຈັກ</u>**

ຄຳວ່າ "ຄຣິສຕະຈັກ" ເປັນຄຳໜຶ່ງທີ່ສຳຄັນທີ່ສຸດໃນພຣະຄຳພີ. ແຕ່ຫນ້າເສຍດາຍ, ມັນຍັງເປັນຄຳທີ່ຫຼາຍຄົນມັກຈະເຂົ້າໃຈ ແລະນຳໃຊ້ຜິດມາເລື້ອຍໆ. ບາງຄັ້ງ ຄົນເຮົາມັກເຂົ້າໃຈວ່າ ຕົວອາຄານແມ່ນຄຣິສຕະຈັກ ("ພວກເຮົາກຳລັງສ້າງຄຣິສຕະຈັກໃໝ່ຢູ່ຖະໜົນໃຫຍ່"). ຫລາຍຄັ້ງ ຄຣິສຕະຈັກກໍຖືເອີ້ນວ່າເປັນຄະນະນິກາຍ ("ຂ້ອຍແມ່ນແບບທິສ. ເຈົ້າເດ? ເປັນຄະນະຫຍັງ?") ບາງເທື່ອ ກໍຖືກເອີ້ນວ່າ ເປັນທີ່ປະຊຸມ ("ພວກເຮົາຈະໄປໂບດເວລາ 8:00 ໂມງເຊົ້າ"). ອີງຕາມພຣະຄຳຂອງພຣະເຈົ້າແລ້ວ, ຄຣິສຕະຈັກແມ່ນຫຍັງ? ຄຣິສຕະຈັກເລີ່ມຕົ້ນເມື່ອໃດ? ຄຣິສຕະຈັກມີຈັກຄຣິສຕະຈັກ? ຄຣິສຕະຈັກທີ່ແທ້ຈິງມີພຽງຄຣິສຕະຈັກດຽວບໍ? ນີ້ແມ່ນບາງຄຳຖາມທີ່ພວກເຮົາຈະເບິ່ງນຳກັນໃນບົດຮຽນນີ້.

<u>ຄຣິສຕະຈັກແມ່ນຫຍັງ?</u>

ວິທີທີ່ດີທີ່ສຸດໃນການຕີຄວາມຫມາຍຄຳສັບທີ່ພົບໃນພຣະຄຳພີ ຄື ການໃຊ້ພຣະຄຳພີຕີຄວາມໝາຍພຣະຄຳພີເອງ. ພວກເຮົາສາມາດ:

1) ເບິ່ງຈາກຄຳສັບທີ່ມີຢູ່ໃນເນື້ອເລື່ອງຂອງພຣະທຳຕອນນັ້ນໆ;

2) ທຽບໃສ່ກັບພຣະທຳຕອນອື່ນທີ່ໃຊ້ຄຳສັບດຽວກັນ.

ເຮັບເຣີ 2:12 ມີຄຳວ່າ, "ຄຣິສຕະຈັກ": "ໂດຍພຣະອົງຊົງກ່າວວ່າ, ເຮົາຈະປະກາດພຣະນາມຂອງເຮົາແກ່ອ້າຍເອື້ອຍນ້ອງຂອງເຮົາ, ເຮົາຈະຮ້ອງເພງສັນລະເສີນໃນທ່າມກາງຊຸມຊົນ." ພຣະທຳເຮັບເຣີຂໍ້ນີ້ແມ່ນຂໍ້ພຣະຄຳອ້າງອີງທີ່ເອົາມາຈາກເພງສັນລະເສີນ 22:22: "ຂ້ານ້ອຍຈະປະກາດພຣະນາມຂອງພຣະອົງ ຕໍ່ພວກພີ່ນ້ອງຂອງຂ້ານ້ອຍທີ່ພຣະອົງໄດ້ຊົງກະທຳ ແລະ ຂ້ານ້ອຍຈະສັນລະເສີນພຣະອົງ." ພວກເຮົາເຫັນໄດ້ວ່າ "ຄຣິສຕະຈັກ" ໃນພາສາເຮັບເຣີຖືກແປເປັນ "ຊຸມຊົນ" ໃນເພງສັນລະເສີນບົດທີ 22. ດັ່ງນັ້ນ, ຄຣິສຕະຈັກແມ່ນກຸ່ມຄົນ. ພວກເຮົາຕ້ອງລຶບຄວາມເຂົ້າໃຈເກົ່າໆ ທີ່ວ່າ ຄຣິສຕະຈັກໝາຍເຖິງອາຄານ, ຄະນະນິກາຍ ຫຼືທີ່ປະຊຸມອອກໄປຈາກຄວາມຄິດຂອງເຮົາ. ໃນເວລາທີ່ພວກເຮົາໄດ້ຍິນຄຳວ່າ "ຄຣິສຕະຈັກ." ໃຫ້ພວກເຮົາຄິດເຖິງຊຸມນຸມຊົນ ຫຼື ກຸ່ມຄົນໃດໜຶ່ງທີ່ເຊື່ອໃນພຣະຄຣິດ.

ຮູບ

ທີ່ມາ: https://filedn.com/lD0GfuMvTstXgqaJfpLL87S/sweet_images/jpg/44/44_Ac_28_09_RG.jpg -
ໃຊ້ສໍາລັບເປັນຕົວຢ່າງຂອງຄຣິສຕະຈັກເທົ່ານັ້ນ

## ຄຣິສຕະຈັກມີຈັກຄຣິສຕະຈັກ?

ມີສອງຄໍາຖາມທີ່ພວກເຮົາຈະເບິ່ງນໍາກັນໃນທີ່ນີ້. ມີຈັກຄຣິສຕະຈັກທີ່ຖືກກ່າວເຖິງໃນພຣະຄໍາພີ? ມີຈັກຄຣິສຕະຈັກທີ່ພຣະເຈົ້າຮັບຮູ້ໃນປັດຈຸບັນນີ້?
ມີບາງຄົນສອນວ່າ ໃນພຣະຄໍາພີມີພຽງຄຣິສຕະຈັກດຽວ. ອີກຄໍາສອນໜຶ່ງແມ່ນບອກວ່າ ໃນພຣະຄໍາພີເດີມບໍ່ມີຄໍາວ່າ ຄຣິສຕະຈັກ, ຄໍາວ່າ ຄຣິສຕະຈັກ ຫາກໍ່ມາມີໃນພຣະຄໍາພີໃຫມ່. ຄໍາສອນທັງສອງນີ້ແມ່ນຜິດໝົດ.

ໃນປະຫວັດສາດ, ຄໍາວ່າ ຄຣິສຕະຈັກ ປະກົດໃຫ້ເຫັນທໍາອິດໃນພຣະຄໍາພີແມ່ນກິດຈະການ 7:38: “ຜູ້ນີ້ແຫຼະ ທີ່ຮ່ວມຊຸມນຸມກັບປະຊາຊົນອິດສະຣາເອນຢູ່ເທິງຖິ່ນແຫ້ງແລ້ງກັນດານ ເພິ່ນໄດ້ຢູ່ໃນທີ່ນັ້ນກັບກັບບັນພະບຸລຸດຂອງພວກເຮົາ ແລະກັບເທວະດາຕົນທີ່ໄດ້ກ່າວແກ່ເພິ່ນທີ່ເທິງພູເຂົາຊີນາຍ ບ່ອນທີ່ເພິ່ນໄດ້ຮັບພຣະທໍາອັນມີຊີວິດຖາວອນມາໃຫ້ພວກເຮົາ” ພວກເຮົາເຫັນໄດ້ວ່າ “ຄຣິສຕະຈັກໃນຖິ່ນແຫ້ງແລ້ງກັນດານ” ແມ່ນຄຣິສຕະຈັກຂອງຊາວຢິວທີ່ຢູ່ໃນສະໄໝຂອງໂມເຊ ຊຶ່ງຕັ້ງຢູ່ເທິງພູຊີນາຍ (ອົບພະຍົບບົດທີ 19). ຄຣິສຕະຈັກແຫ່ງນີ້ຢູ່ພາຍໃຕ້ພຣະບັນຍັດຂອງ “ເວລາທີ່ຜ່ານມາ” ແລະຊອກຫາອານາຈັກຢູ່ໃນໂລກນີ້. ຄຣິສຕະຈັກນີ້ໄດ້ຕັ້ງຂຶ້ນໃນສະໄໝພຣະຄໍາພີເດີມ (ປະມານ 1,500 ປີກ່ອນ ຄສ ແລະກ່ອນທີ່ຈະມີພວກອັກຄະສາວົກຮັບໃຊ້ໃນອິດສະຣາເອນ). ເພາະສະນັ້ນ, ພວກເຮົາສາມາດເຫັນໄດ້ ຜູ້ທີ່ເວົ້າວ່າ ຄຣິສຕະຈັກຫາກໍ່ມີ ໃນພຣະຄໍາພີໃຫມ່ແມ່ນເວົ້າບໍ່ຖືກ.

ຮູບ

ທີ່ມາ: https://filedn.com/lD0GfuMvTstXgqaJfpLL87S/sweet_images/jpg/02/02_Ex_19_10_RG.jpg -
ໃຊ້ສໍາລັບເປັນຕົວຢ່າງຂອງຄຣິສຕະຈັກໃນຖິ່ນແຫ້ງແລ້ງກັນດານເທົ່ານັ້ນ

ໃນພຣະຄໍາພີໃຫມ່ ພວກເຮົາຍັງພົບເຫັນພຣະຄໍາພີອີກຈໍານວນຫນຶ່ງທີ່ເວົ້າເຖິງຄຣິສຕະຈັກຂອງຊາວຢິວ “ຝ່າຍເຮົາຈຶ່ງບອກວ່າ ເຈົ້າຄືເປໂຕ ເທິງສີລາກ້ອນນີ້ເຮົາຈະສ້າງຄຣິສຕະຈັກຂອງເຮົາຂຶ້ນ ແລະຄວາມມໍລະນາຈະເອົາຊະນະຄຣິສຕະຈັກນີ້ບໍ່ໄດ້.” (ມັດທາຍ 16:18). ພວກເຮົາຮູ້ວ່າ ສາວົກທີ່ພຣະຄຣິດໄດ້ກ່າວຢູ່ໃນພຣະທັມມັດທາຍຄື:

1) ຊາວຢິວ;

2) ການໃຊ້ຊີວິດພາຍໃຕ້ພຣະບັນຍັດ;

3) ການສະແຫວງຫາອານາຈັກຝ່າຍໂລກນີ້.

ຄຣິສຕະຈັກນີ້ແມ່ນຄ້າຍຄືກັນກັບ "ຄຣິສຕະຈັກໃນຖິ່ນແຫ້ງແລ້ງກັນດານ." ແຕ່ໃນພຣະທຳມັດທາຍ 16:18 ພຣະຄຣິດບອກ ວ່າ "ເຮົາຈະສ້າງຄຣິສຕະຈັກຂອງເຮົາຂຶ້ນມາ." ເພາະສະນັ້ນ, ພຣະອົງໄດ້ບອກວ່າ ຄຣິສຕະຈັກ ແມ່ນເລື່ອງຂອງອະນາຄົດ. ເຖິງແມ່ນວ່າ ມັນຈະຄ້າຍຄືກັນກັບ "ຄຣິສຕະຈັກໃນຖິ່ນແຫ້ງແລ້ງກັນດານ," ຄຳວ່າ ຄຣິສຕະຈັກ ໃນມັດທາຍບົດທີ 16 ແມ່ນເທື່ອທີສອງທີ່ພວກເຮົາພົບໃນພຣະຄຳພີ. (ພຣະຄຳພີບໍ່ໄດ້ຕັ້ງຊື່ໃຫ້ຄຣິສຕະຈັກນີ້ຄືກັບ "ຄຣິສຕະຈັກໃນຖິ່ນແຫ້ງແລ້ງກັນດານ." ແຕ່ພວກເຮົາອາດຈະເອີ້ນໄດ້ວ່າ ຄຣິສຕະຈັກແຫ່ງລາຊະອານາຈັກ ເພາະຖືກເປັນຄຣິສຕະຈັກທີ່ປະກາດຂ່າວປະເສີດເລື່ອງລາຊະອານາຈັກ. ນອກຈາກນີ້, ຄຣິສຕະຈັກນີ້ຈະຢູ່ໃນອານາຈັກພັນປີເທິງແຜ່ນດິນໂລກ.) ມັດທາຍ 18:17, ກິດຈະການ 2:47, ແລະ ຢາໂກໂບ 5:14 ແມ່ນພຣະຄຳຂໍ້ອື່ນໆ ທີ່ກ່າວເຖິງຄຣິສຕະຈັກໃນອານາຈັກເທິງແຜ່ນດິນໂລກ.

ໃນທີ່ສຸດ, ໂປໂລໄດ້ຂຽນເຖິງ "ຄຣິສຕະຈັກ, ຊຶ່ງເປັນພຣະກາຍຂອງພຣະອົງ" (ເອເຟໂຊ 1:22-23). ຄຣິສຕະຈັກນີ້ຢູ່ພາຍໃຕ້ພຣະຄຸນ, ບໍ່ແມ່ນຢູ່ພາຍໃຕ້ພຣະບັນຍັດ. ເປັນຄຣິສຕະຈັກທີ່ພຣະເຈົ້າກຳລັງສ້າງຂຶ້ນໃນຍຸກແຫ່ງພຣະຄຸນນີ້. ສະມາຊິກຂອງຄຣິສຕະຈັກນີ້ຈະຖືກຮັບຂຶ້ນໄປເທິງສະຫວັນ ແຕ່ຈະບໍ່ຢູ່ໃນອານາຈັກຂອງໂລກນີ້. ຈົດໝາຍຝາກຂອງໂປໂລແມ່ນໜັງສືຫຼັ້ມດຽວໃນພຣະຄຳພີທີ່ກ່າວເຖິງຄຣິສຕະຈັກ, ພຣະກາຍຂອງພຣະຄຣິດ. ຄຣິສຕະຈັກນີ້ແມ່ນຕ່າງກັນຢ່າງຊັດເຈນກັບ "ຄຣິສຕະຈັກໃນຖິ່ນແຫ້ງແລ້ງກັນດານ" ຫຼືຄຣິສຕະຈັກຝ່າຍອານາຈັກໂລກນີ້. ຜູ້ທີ່ກ່າວວ່າ ພຣະຄຳພີສອນແຕ່ເລື່ອງຄຣິສຕະຈັກດຽວແມ່ນບໍ່ເວົ້າຖືກຕ້ອງ.

ພວກເຮົາໄດ້ເຫັນວ່າ ມີຫຼາຍກວ່າໜຶ່ງຄຣິສຕະຈັກທີ່ພຣະຄຳພີໄດ້ເວົ້າເຖິງ. ແຕ່ຈະມີຈັກຄຣິສຕະຈັກທີ່ພຣະເຈົ້າຮັບຮູ້ໃນປັດຈຸບັນນີ້? ຄະນະແບບຕິສເດະ? ຄະນະເມໂທດິສເດະ? ຄະນະຄາໂທລິກເດະ? ຄະນະສະພາພຣະເຈົ້າເດະ? ແລະຄະນະອື່ນໆ. ທັງໝົດທີ່ກ່າວມານີ້ແມ່ນຫຍັງຄືຄຣິສຕະຈັກທີ່ແທ້ຈິງ? ຫຼືວ່າພຣະເຈົ້າຮັບຮູ້ວ່າທັງຫມົດຄືຄຣິສຕະຈັກຂອງພຣະອົງ? ໃນເອເຟໂຊ 4:4 ພວກເຮົາຈະເຫັນວ່າ "ມີຮ່າງກາຍອັນດຽວ ແລະ ມີພຣະວິນຍານອົງດຽວ ມີຄວາມຫວັງໃຈອັນດຽວ ໃນການທີ່ພຣະເຈົ້າໄດ້ຊົງເອີ້ນເອົາພວກເຈົ້າແລ້ວນັ້ນ." ພຣະເຈົ້າຮັບຮູ້ພຽງແຕ່ຄຣິສຕະຈັກດຽວເທົ່ານັ້ນ ປັດຈຸບັນນີ້ ຄຣິສຕະຈັກທີ່ແທ້ຈິງແມ່ນ "ຄຣິສຕະຈັກ, ເຊິ່ງເປັນພຣະກາຍຂອງພຣະອົງ."

<u>ເຈົ້າເປັນສະມາຊິກຂອງຄຣິສຕະຈັກໄດ້ແນວໃດ?</u>

ປັດຈຸບັນນີ້, ພຣະເຈົ້າຊົງຮັບຮູ້ພຽງແຕ່ຫນຶ່ງຄຣິສຕະຈັກເທົ່ານັ້ນ. ເພາະສະນັ້ນ ການໄດ້ເປັນສະມາຊິກຂອງຄຣິສຕະຈັກນີ້ແມ່ນສຳຄັນຫຼາຍ. ຄະນະນິກາຍທີ່ມະນຸດສ້າງຂຶ້ນອາດມີຂໍ້ກຳນົດຫຼາຍຢ່າງກ່ອນທີ່ຈະໄດ້ເປັນສະມາຊິກ

ຂອງຄຣິສຕະຈັກ. ຢ່າງໃດກໍຕາມ, ການເຂົ້າເປັນສະມາຊິກຂອງ "ຄຣິສຕະຈັກ, ຊຶ່ງເປັນພຣະກາຍຂອງພຣະອົງ" ພວກເຮົາຕ້ອງເຊື່ອໃນຂ່າວປະເສີດ (ເບິ່ງບົດຮຽນທີ 5–9).

ເວລາທີ່ພວກເຮົາວາງໃຈໃນຄວາມຕາຍຂອງພຣະຄຣິດທີ່ຊົງໄຖ່ບາບກໍາຂອງພວກເຮົາ, ພຣະວິນຍານບໍລິສຸດກໍຈະໃຫ້ບັບຕິສະມາແກ່ພວກເຮົາ ເພື່ອເຂົ້າສ່ວນໃນພຣະກາຍຂອງພຣະຄຣິດ. ບັບຕິສະມານີ້ບໍ່ແມ່ນການບັບຕິສະມາດ້ວຍນໍ້າ. "ເຖິງແມ່ນພວກເຮົາຈະເປັນຊາວຢິວ ຫລືຄົນຕ່າງຊາດກໍດີ ເປັນຂ້ານ້ອຍ ຫລືເປັນອິດສະຫລະກໍດີ, ເຮົາທັງຫລາຍໄດ້ຮັບບັບຕິສະມາ ໂດຍພຣະວິນຍານອົງດຽວ ຈຶ່ງເຂົ້າເປັນກາຍອັນດຽວກັນ ແລະ ພຣະວິນຍານອົງດຽວກັນນັ້ນເປັນເໝືອນນໍ້າທີ່ປະທານໃຫ້ເຮົາທຸກຄົນໄດ້ດື່ມ" (1 ໂກລິນໂທ 12:13). ການບັບຕິສະມາທີ່ພວກເຮົາໄດ້ສຶກສາຢູ່ໃນບົດຮຽນທີ 13.] ການບັບຕິສະມາ "ໂດຍພຣະວິນຍານອົງດຽວ" ເທົ່ານັ້ນທີ່ເຮັດໃຫ້ເຮົາກາຍເປັນສະມາຊິກຂອງ "ຄຣິສຕະຈັກ, ຊຶ່ງເປັນພຣະກາຍຂອງພຣະຄຣິດ."

<u>ຄໍາຖາມທວນຄືນ ບົດຮຽນ 27 – ຄຣິສຕະຈັກ</u>

<u>ຖືກ ຫຼື ຜິດ</u>

1. ຄໍາວ່າ "ຄຣິສຕະຈັກ" ບໍ່ເຄີຍພົບໃນພຣະຄໍາພີ.
2. ມີພຽງແຕ່ຄຣິສຕະຈັກດຽວທີ່ຖືກກ່າວເຖິງໃນພຣະຄໍາພີ.
3. ຫຼາຍຂໍ້ໃນພຣະຄໍາພີໃໝ່ໄດ້ກ່າວເຖິງຄຣິສຕະຈັກຂອງຊາວຢິວ.
4. ປັດຈຸບັນນີ້ ພຣະເຈົ້າໄດ້ຮັບຮູ້ ແລະຊົງຍອມຮັບໃນຫຼາຍຄະນະນິກາຍ ຫຼື ຄຣິສຕະຈັກ.

<u>ຄໍາຖາມແບບປາລະໄນ</u>

5. ເຮັບເຣີ 2:12 ມີຄໍາວ່າ "ຄຣິສຕະຈັກ" ແມ່ນຄໍາເວົ້າທີ່ອ້າງອີງມາຈາກເພງສັນລະເສີນບົດທີ 22 ຄໍາສັບທີ່ໃຊ້ແມ່ນ:
   ກ. ຕຶກອາຄານ
   ຂ. ຄະນະນິກາຍ
   ຄ. ຊຸມນຸມຊົນ
   ງ. ທີ່ປະຊຸມ

6. ຕາມປະຫວັດສາດ, ຄຣິສຕະຈັກທໍາອິດທີ່ພົບເຫັນຢູ່ໃນພຣະຄໍາພີແມ່ນ:
   ກ. ຄຣິສຕະຈັກໃນຖິ່ນແຫ້ງແລ້ງກັນດານ
   ຂ. ຄຣິສຕະຈັກໂຣມັນກາໂຕລິກ
   ຄ. ຄຣິສຕະຈັກ, ພຣະກາຍຂອງພຣະຄຣິດ
   ງ. ຄຣິສຕະຈັກແບບທິສ

7. ສະມາຊິກຂອງຄຣິສຕະຈັກ, ພຣະກາຍຂອງພຣະຄຣິດ:

ກ. ໃຊ້ຊີວິດພາຍໃຕ້ພຣະບັນຍັດ

ຂ. ຕ້ອງໄດ້ຮັບການບັບຕິສະມາດ້ວຍນໍ້າເພື່ອເຂົ້າເປັນສະມາຊິກ

ຄ. ຢູ່ໃນຄຣິສຕະຈັກປອມ

ງ. ຢູ່ພາຍໃຕ້ພຣະຄຸນ

<u>ຕື່ມໃສ່ຊ່ອງຫວ່າງ</u>

8. ເພື່ອຈະເຂົ້າເປັນສະມາຊິກຂອງ "ຄຣິສຕະຈັກ, ຊຶ່ງເປັນພຣະກາຍຂອງພຣະອົງ" ພວກເຮົາຕ້ອງໄດ້ຮັບ________.

9. ຄຣິສຕະຈັກແມ່ນ________.

10. ການສອນວ່າ ບໍ່ມີ________ຢູ່ໃນພຣະຄຳພີເດີມແມ່ນບໍ່ຖືກຕ້ອງ.

<u>ສຳລັບສຶກສາເພີ່ມເຕີມ</u>

1. ຜູ້ທີ່ເຊື່ອຕ້ອງເຕົ້າໂຮມຢູ່ບ່ອນດຽວກັນບໍ ຈຶ່ງຈະເອີ້ນວ່າເປັນຄຣິສຕະຈັກໄດ້? ອ່ານກິດຈະການ 14:27 ແລະ 1 ໂກລິນໂທ 14:23.

2. ແມ່ນຄຣິສຕະຈັກໃດທີ່ຖືກກ່າວເຖິງໃນຟີລິບປອຍ 3:6?

3. ຫຼັງຈາກທີ່ພຣະຄຣິດໄດ້ຟື້ນຄືນມາຈາກຕາຍ, ຄຣິສຕະຈັກໃນເຢຣູຊາເລັມຫວັງໃຈວ່າຕົນເອງຈະໄດ້ໄປສະຫວັນບໍ? (ເບິ່ງກິດຈະການ 1:6)

4. ພຣະຄຳຂອງພຣະເຈົ້າບອກໃຫ້ຄຣິສຕະຈັກທ້ອງຖິ່ນກໍ່ສ້າງອາຄານບໍ ເພື່ອຈະເປັນບ່ອນເຕົ້າໂຮມກັນ? (ເບິ່ງ ໂລມ 16:5 ແລະ 1 ໂກລິນໂທ 16:19)

5. ຂໍ້ພຣະຄຳພີຕໍ່ໄປນີ້ພັນລະນາເຖິງຄຣິສຕະຈັກໃນປັດຈຸບັນຄືແນວໃດແດ່? (ໂລມ 12:5; 1ໂກລິນໂທ 12:12,14; ເອເຟດ 2:16; 4:12)

6. ອ່ານ 1 ໂກລິນໂທ 12:15-20, ຄາລາເຕຍ 3:28 ແລະ ເອເຟໂຊ 4:15-16. ອະໄວຍະວະບາງສ່ວນໃນພຣະກາຍຂອງພຣະຄຣິດມີຄວາມສຳຄັນ ຫຼື ມີຄວາມຈຳເປັນຫຼາຍກວ່າອະໄວຍະວະສ່ວນອື່ນໆບໍ?

7. ໃຜເປັນປະມຸກ (ຫົວ) ຂອງຄຣິສຕະຈັກ, ພຣະກາຍຂອງພຣະຄຣິດ? (ເບິ່ງ ເອເຟໂຊ 4:15 ແລະ 5:23).

8. ໂຣມ 12:5 ສອນຫຍັງກ່ຽວກັບການເປັນສະມາຊິກຂອງຄຣິສຕະຈັກ?

9. ຫຼາຍຄົນມີຄວາມກັງວົນກ່ຽວກັບຄວາມສາມັກຄີລະຫວ່າງຄຣິສຕະຈັກຕ່າງໆ ຫຼື ຄະນະນິກາຍ. ຄວາມເປັນນໍ້າໜຶ່ງໃຈດຽວກັນຂອງຄຣິສຕະຈັກເກີດຂຶ້ນໄດ້ແນວໃດ? (ເບິ່ງ 1 ໂກລິນໂທ 12:13 ແລະ ເອເຟໂຊ 4:4-6)

10. ພວກເຮົາຖືກເອີ້ນໃຫ້ສ້າງຄວາມສາມັກຄີພາຍໃນຄຣິສຕະຈັກ ແມ່ນບໍ? (ເບິ່ງ ເອເຟໂຊ 4:2–3)